ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກອງຈະລາຈອນທາງອາກາດລາວ ເລກທີ 2915/ກຈລ

ນະຄອນຫລວງວຽງຈັນ, ວັນທີ 15 ກັນຍາ 2026

# ໜັງສືແຈ້ງເຊີນປະມູນ

1. ກອງຈະລາຈອນທາງອາກາດລາວ ກະຊວງໂຍທາທິການ ແລະ ຂົນສົ່ງ. ໄດ້ຮັບງົບປະມານປະຈຳປີ 2026. ສຳລັບການປະມູນ-ຈັດຈ້າງບໍລິການບຳລຸງຮັກສາສ້ອມແປງແອເຢັນ ປະຈຳປີ 2026 ຈຶ່ງຂໍເຊີນບັນດາບໍລິສັດ ທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຍື່ນຊອງປະມູນ, ກຳນົດເວລາໃນການມອບ-ຮັບ ແມ່ນພາຍໃນ 30 ວັນ;
2. ການປະມູນຈະດຳເນີນຕາມຂັ້ນຕອນ ການປະມູນເປີດກ້ວາງພາຍໃນ ທີ່ໄດກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຮ່ວມແຂ່ງຂັນປະມູນ ສາມາດຕິດຕໍ່ພົວພັນເອົາເອກະສານປະມູນໄດ້ທີ່ ກອງຈະລາຈອນທາງອາກາດລາວ ກະຊວງໂຍທາທິການ ແລະ ຂົນສົ່ງ, ເບີໂທລະສັບຕິດຕໍ່ 021 520776, 020 55342660, 020 5411242 ໃນເວລາລັດຖະການ;
4. ເອກະສານປະມູນເລີ່ມຂາຍນັບແຕ່ວັນທີແຈ້ງເຊີນເປັນຕົ້ນໄປໃນລາຄາ 1.000.000 ກີບ/ຊອງ. ວິທີການຊຳລະເປັນເງິນສົດ ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ຈະໄດ້ນຳໃຊ້ເຂົ້າໃນວຽກງານການປະມູນ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ່ 22 ຕຸລາ 2026. ຊອງປະມູນທຸກໆຊອງຈະໄດ້ເປີດເວລາ 09:00 ໂມງ ຂອງວັນທີ່ 22 ຕຸລາ 2026 ຢູ່ຫ້ອງປະຊຸມ ກອງຈະລາຈອນທາງອາກາດລາວໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນເຂົ້າຮ່ວມແຂ່ງຂັນ ທີ່ຫ້ອງປະຊຸມຂອງກອງຈະລາຈອນທາງອາກາດລາວ. ຫາກຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຖືກຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ;
6. ຊອງປະມູນຕ້ອງຄໍ້າປະກັນດ້ວຍແຊັກ (ວີຊ່າ) ຫຼື ໜັງສືຄໍ້າປະກັນອອກໂດຍທະນາຄານ ຊຶ່ງມີມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນດັ່ງກ່າວຕາມທາງຄອນດ້ວຍ

**ຫົວໜ້າກອງ**

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງຈະລາຈອນທາງອາກາດລາວ

ອຳດູນລາ ສາລີນທອນ